ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສຳນັກງານນາຍົກລັດຖະມົນຕີ

ເລກທີ 14 /ນຍ.

ວຽງຈັນ, ວັນທີ 28 ກຸມພາ 2003

## ຂໍ້ຕົກລົງ

### ຂອງນາຍົກລັດຖະມົນຕີ ກ່ຽວກັບກົນໄກການນຳເຂົ້າລົດ, ສິ້ນສ່ວນອາໄຫລ່ລົດ ເພື່ອມາປະກອບຢູ່ໂຮງງານ

---

- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍ ສ່ວຍສາອາກອນ ສະບັບເລກທີ 10/ສພຊ, ລົງວັນທີ 12/10/ 2002.
- ອີງຕາມການສະເໜີຂອງທ່ານລັດຖະມົນຕີວ່າການກະຊວງການຄ້າ ສະບັບເລກທີ 1307/ກຄ.ຕປທ, ລົງວັນທີ 25/11/2002.
- ອີງຕາມມະຕິຕົກລົງຂອງກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນທັນວາ 2002 ( ຕັ້ງວັນທີ 25-27/12/2002).

ນາຍົກລັດຖະມົນຕີ ຕົກລົງ :

ມາດຕາ 1 : ປະກາດໃຊ້ລະບົບການນຳເຂົ້າລົດ ແລະຊຸດສິ້ນສ່ວນອາໄຫລ່ລົດ ເພື່ອມາປະກອບຢູ່ໂຮງງານ ໂດຍໃຫ້ດຳເນີນການຕາມກົນໄກຕະຫລາດ ແລະພາຍໃຕ້ລະບຽບກົດໝາຍ ເປັນຕົ້ນ ກົດໝາຍສ່ວຍສາອາກອນ ສະບັບເລກທີ 10/ສພຊ, ລົງວັນທີ 12/10/ 2002 ແລະລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 01/ສປປ, ລົງວັນທີ 15/02/2000, ຊຶ່ງໃຫ້ປະຕິບັດລະບອບການເສຍພາສີ-ອາກອນ-ເດັດຖານ (ເທື່ອດຽວ) ກ່ອນນຳເຂົ້າ.

ມາດຕາ 2 : ໃນສະເພາະໜ້ານີ້ ເຫັນຈຳເປັນໃຫ້ອະນຸຍາດນຳເຂົ້າຍານພາຫານະທີ່ໃຊ້ແລ້ວ (ລົດມືສອງ) ໂດຍໃຫ້ຄິດໄລ່ລາຄາ 80% ຂອງລົດໃໝ່ ເພື່ອເສຍພາສີ-ອາກອນ ຕາມກົດໝາຍພາສີ, ສ່ວຍສາອາກອນ. ຫ້າມການນຳເຂົ້າລົດພວງມະໄລຂວາມາ ໃຊ້ຖາວອນຢູ່ໃນລາວ, ສຳລັບມາດຕະຖານດ້ານເຕັກນິກຂອງລົດແລະສິ້ນສ່ວນຂອງລົດທີ່ຈະໄດ້ຮັບອະນຸຍາດໃຫ້ນຳເຂົ້າມາຂຶ້ນທະບຽນ ແລະປະກອບເປັນລົດ ເພື່ອນຳໃຊ້ຢູ່ ສປປ ລາວ ແມ່ນໃຫ້ປະຕິບັດຕາມຂໍ້ກຳນົດຂອງກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງ ສະບັບເລກທີ 4312/ຄຂປກ, ລົງວັນທີ 11/ 11/2002.

ມາດຕາ 3 : ການນຳເຂົ້າລົດຂອງນັກການທູດ, ຊ່ຽວຊານຕ່າງປະເທດ, ອົງການຈັດຕັ້ງສາກົນ, ການນຳເຂົ້າຮັບໃຊ້ໂຄງການລົງທຶນພາຍໃນ ແລະຕ່າງປະເທດ ການຊ່ວຍເຫລືອລ້າ ແລະກູ້ຢືມຕ່າງໆ ແມ່ນຕ້ອງປະຕິບັດຕາມລະບຽບ ແລະກົດໝາຍກ່ຽວຂ້ອງ ທີ່ໄດ້ປະກາດໃຊ້ແລ້ວ. ສຳລັບການນຳເຂົ້າລົດຮັບໃຊ້ສຳນັກງານອົງການຂອງລັດຖະບານ, ອົງການຈັດຕັ້ງພັກ, ສະພາແຫ່ງຊາດ, ອົງການຈັດຕັ້ງ

ມະຫາຊົນ ລວມທັງແຂວງ, ກຳແພງນະຄອນ ແລະເຂດພິເສດ ໃຫ້ປະຕິບັດຕາມ ແຈ້ງການສະ ເລກທີ 0886/ທສນຍ.ກລຂ, ລົງວັນທີ 19/05/2000 ຢ່າງເຂັ້ມງວດ.

**ມາດຕາ 4** : ສຳລັບລົດເພື່ອປະຕິບັດນະໂຍບາຍຕາມດຳລັດ 71/ນຍ ແມ່ນໃຫ້ປະຕິບັດຄົບຖ້ວນຕາມຈິດໃ ຂອງ ດຳລັດ 71/ນຍ ກຳນົດໄວ້.

**ມາດຕາ 5** : ເຫັນດີໃຫ້ສ້າງສາງປອດພາສີ ສິນຄ້າປະເພດລົດ, ແຕ່ໃຫ້ເຮັດທົດລອງ ເພື່ອຖອດຖອນບົດຮຽ ໂດຍອະນຸມັດໃຫ້ດຳເນີນການ ຢູ່ສົ້ນຂີວມິດຕະພາບ ກຳແພງນະຄອນວຽງຈັນ ແລະໃນເຂດເ ຖະກິດພິເສດ ສະຫວັນ-ເຊໂນ ກ່ອນ. ມອບໃຫ້ກະຊວງການເງິນ ສົມທົບກັບກະຊວງການຄ້າ ຄົ້ນຄວ້າກຳນົດນະໂຍບາຍລະອຽດໃນດ້ານນີ້.

**ມາດຕາ 6** : ໃຫ້ກະຊວງອຸດສາຫະກຳ ແລະຫັດຖະກຳ ເປັນເຈົ້າການສົມທົບກັບ ກະຊວງ ຄຂປກ , ກະຊວ ການເງິນ, ກະຊວງການຄ້າ ແລະພາກສ່ວນກ່ຽວຂ້ອງ ເພື່ອກວດກາຄືນສະພາບການດຳເນີ ລະກິດໂຮງງານປະກອບຍານພາຫານະໃໝ່ 100% (ລົດໃຫຍ່, ລົດນ້ອຍ ແລະລົດຈັກ) ແມ່ ໃຫ້ກວດກາ ແລະຢັ້ງຢືນຄືນ ມາດຕະຖານ ແລະການປະຕິບັດລະບຽບການ, ຖ້າຫາກໂຮງງາ ໃດປະຕິບັດບໍ່ຖືກຕ້ອງກໍ່ໃຫ້ດຳເນີນມາດຕະການຕ່າງໆເຊັ່ນ: ໃຫ້ຕັກເຕືອນ ເພື່ອຢຸດເຊົາການ ເຄື່ອນໄຫວ ຫລື ລຶບລ້າງການປະກອບການ.

- ສຳລັບໂຮງງານປະກອບຍານພາຫານະທີ່ໃຊ້ແລ້ວ (ລົດມືສອງ)ທີ່ໄດ້ຮັບອະນຸຍາດແລ້ວ, ຖ້າໂ ງານໃດເຮັດດີ, ຮັງຄົມຍັງຕ້ອງການ ແມ່ນອະນຸຍາດໃຫ້ສືບຕໍ່ດຳເນີນການຕໍ່ໄປຕາມຄວາມຕ້ ການຂອງຕະຫລາດ ແລະໃຫ້ຂະແໜງການກ່ຽວຂ້ອງ ຄຸ້ມຄອງ ກວດກາດ້ານມາດຕະຖານເ ນິກ ແລະຄຸນນະພາບຂອງສິ້ນສ່ວນຂອງຍານພາຫານະທີ່ຈະນຳເຂົ້າມາປະກອບ ແລະຍານພ ຫານະທີ່ຟື້ນຟູແລ້ວ ຕ້ອງບໍ່ໃຫ້ຫລຸດ 80% ຢ່າງເຂັ້ມງວດ; ສ່ວນໃນຕໍ່ໜ້າບໍ່ໃຫ້ຂະແໜງການ ຂ້ອງ ແລະອຳນາດການປົກຄອງທ້ອງຖິ່ນອະນຸມັດການປະກອບຍານພາຫານະທີ່ໃຊ້ແລ້ວ (ລົ ມືສອງ) ຕື່ມອີກ ແລະໃຫ້ຫັນໂຮງງານທີ່ມີແລ້ວນັ້ນ ເປັນໂຮງງານປະກອບຍານພາຫານະໃໝ 100% ຕາມຄວາມຕ້ອງການຕົວຈິງ ແລະຄວາມນິຍົມຂອງຕະຫລາດພາຍໃນ ແລະຕ່າງປະ
- ໃຫ້ເບິ່ງຄືນລະບົບການອະນຸຍາດປະກອບລົດທັງ 3 ຮູບແບບ SKD, CKD, IKD ໂດຍໃຫ້ເ ຕາມທິດຫັນເປັນອຸດສາຫະກຳ-ທັນສະໄໝ, ສົ່ງເສີມສີມືແຮງງານ ແລະວັດຖຸດິບຂອງລາວເ ນັບມື້ນັບສູງຂຶ້ນ.

**ມາດຕາ 7**: ກະຊວງການຄ້າ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະຫັດຖະກຳ, ກະຊວງ ຄຂປກ ກະຊວງແຮງງານ ແລະສະຫວັດດີການສັງຄົມ, ຄະນະຄຸ້ມຄອງການລົງທຶນ ແລະພາກສ່ວນກ່ ຂ້ອງ ຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ, ໜ້າທີ່ ແລະຄວາ ຜິດຊອບຂອງໃຜລາວ ຢ່າງເຂັ້ມງວດ.

**ມາດຕາ 8** : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ ວັນທີ 1 ເດືອນເມສາ ປີ 2003 ເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ